

# ຂັບ ລຳ ເພງລາວ ມາແຕ່ໃສ ?

## ໄມ້ຈັນ

ສຳນັກພິມ ນັກປະພັນລາວ

# ໄມ້ຈັນ



.............................

ຂ້ອຍເກີດໃນແຫ່ງຫ້ອງ ແຄມຝັ່ງເຊບັ້ງຫຽງ
**ຫົວຫາດ**ເປັນແດນດິນ ບ່ອນຝັງສາຍບືໄວ້
**ສອງຄອນ**ຄືເມືອງບ້ານ ສະຫວັນຄຳໃຕ້ຕ່ຳ
**ເຜົ່າຜູ້ໄທ**ເພິ່ນເອີ້ນ ພົງເຊື້ອຊົ່ສະກຸນ
ປີຣະກາສອງພັນຫ້າ ມິຖຸນາແຮມສິບສີ່
ພຸດດີຖີເມື່ອເຊົ້າ ອະຣຸນແຈ້ງຮຸ່ງຈວນ

ພໍ່ຂ້ອຍພູມພາກລົ້ນ ໄດ້ຊື່ຊາວນາ
ແມ່ປູກມອນທໍໄໝ ຕ່ຳເຂັນຜືນຜ້າ
**"ຫົງເຫີນ"** ນາມຂອງຂ້ອຍ **"ຊຸນ"(ບູລົມ)**ຄືນາມປູ່
**"ພິທັກ"**ເຕີມຕື່ມເຂົ້າ ເປັນຊັ້ນຊື່ສະກຸນ

**ເຊົ້າໂຮຍເກືອ**ແມ່ບ່າຍໃຫ້ ປັ້ນທຸ່ນເປັນທຶນແຮງ
ທະນູແສງສອນສິນ ພໍ່ເພັງພຽນຊີ້
ປູປາຫອຍຊິວກຸ້ງ ເຊບັ້ງຫຽງລ້ຽງເຕີບໃຫຍ່
ໂຄກໄມ້ຈິກໄມ້ຮັງ ຫ້ອງທົ່ງທາມຮ່ອມຫ້ວຍ
ນິທານທຳພື້ນບ້ານ **"ລືຄຳຫານ"** ຊາດຊັ້ນ
ປຸນປ້ອງປູກປຸງ ຂ້ອຍນາ

**ທ້າວຮຸ່ງເຈືອງ**
**ສັງສິນໄຊ**ຄືບ່ອນເບື້ອງ ຕຳລາໃຫຍ່ຂຽນໜັງສື
ລາຍນິ້ວມືພະລັງຮັກ ໃສ່ລົງໃນພື້ນ
ຜືນແຜ່ນພູມລາວລ້ອນ ອຸດົມການສະຖິດທ່ຽງ
ຄຽງຄູ່ດິນແລະຟ້າ ໃຫ້ປະຊາພີ່ນ້ອງ
ປອງຄົ້ນອ່ານດູ ແດ່ເນີ !

ແດ່.. ເອື້ອຍ ດວງເດືອນ

ບຸນຍາວົງ

ບົວເງິນ ຊຸມພິທາ

20/9/2012

# ຂັບ ລຳ ເພງລາວ ມາແຕ່ໃສ ?

..............................
ນັກຂຽນ : ໄມ້ຈັນ
ບັນນາທິການ : ຫົງເຫີນ ຊຸນພິທັກ
ຕີພິມ-ພິສູດອັກສອນ : ດວງມາລາ ຣາຊະວົງໄຊ
ອອກແບບ-ຈັດໜ້າ : ນິວັດ (ນຸກ) ຊຸນພິທັກ
© ສະຫງວນລິຂະສິດ : ຫົງເຫີນ ຊຸນພິທັກ 2012

**ສຳນັກພິມນັກປະພັນລາວ**
ສຳນັກງານ ວາລະສານວັນນະສິນ (ຊື່ວລາວ)
ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະທ່ອງທ່ຽວ
ໂທລະສັບ/ແຟັກ: 856-21- 219871
*Email: hong-writer@hotmail.com*

ພິມຄັ້ງແຣກ: 2012 ຈຳນວນ 3000 ເຫຼັ້ມ
ທະບຽນ: 121 ພຈ 14032012
**ພິມທີ່:** ໂຮງພິມ ມັນທາຕຸລາດ ບ້ານສີຖານເໜືອ
ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ
ໂທລະສັບ/ແຟັກ: 021-21 222130

**ຂໍ້ມູນທາງບັນນານຸກົມ ຂອງຫໍສະໝຸດແຫ່ງຊາດລາວ**
**ໄມ້ຈັນ**
**ຂັບລຳເພງລາວ ມາແຕ່ໃສ ?** /ໄມ້ຈັນ.--ວຽງຈັນ:
ສຳນັກພິມນັກປະພັນລາວ, 2012.
114 ໜ້າ: ພາບປະກອບສີ 21 ຊມ
1. ປະຫວັດເພງລາວ 2. ເພງລາວ. I. ຊື່ເລື່ອງ

782.42--dc21
ISBN 978-9932-00-72-2





# ຂັບ ລຳ ເພງລາວ ມາແຕ່ໃສ ?





ຮ່ວມສະໜັບສະໜູນ ການຈັດພິມໂດຍ
ຕຸລາໄຊ ວໍລະຈິດ
ປະທານບໍລິສັດ ດາວສະຫວັນ ພ້ອມຄອບຄົວ

.........................................

ຂອບ"ນ້ຳໃຈ" ແຈ່ມເຈົ້າ ໃຈງາມຊື່ "ຕຸລາໄຊ"
ທີ່ໄດ້ແລຫຼິງເຫັນ ຄ່າຄຸນອັກສອນຊື້
ກອນກະວີຂານເລື້ອງ ເມືອງລາວບາດກ້າວໃໝ່
ຂັບ-ລຳລາວ ເພງລາວ ຈິ່ງໄດ້ຟູພຸ່ງພົ້ນ
ຜົນ"ໄມ້ຈັນ" ຈິ່ງໄດ້ຫອມຮຸ່ຍຕ້ອງ ຜອງເທົ້າທົ່ວແດນ ເຈົ້າເຮີຍ

ສຳນັກພິມນັກປະພັນລາວ

# ສາລະບັນເລື່ອງ

ໜ້າ


ຄຳຊົມເຊີຍ 9
ຄຳນຳຂອງສຳນັກພິມ 11
ໄຂຄຳຄວນ 13

໑. ຄຳວ່າ ຂັບ-ລຳ-ຟ້ອນ ມາແຕ່ໃສ ? 19
໒. ຂັບ-ລຳລາວ ມີມານານກວ່າ 3000 ປີ 35
໓. ຮູບປັດຈຸບັນບອກອະດີດເຖິງແຖນ 37
໔. ຄຳວ່າ ເພງ ມາແຕ່ໃສ ? 41

໕. ຂັບ-ລຳ-ເຊີ້ງ ຂະຫຍາຍຕົວບໍ່ເທົ່າທຽມ 53
໖. ລຳເລື່ອງ ໂຂນ ລະຄອນ 61
໗. ພວກຄັບພະຊຸມ ໃນສະໄໝພະເຈົ້າສຸຣິຍະວົງສາ 65

໘. ໝໍ ກັບ ນັກສະແດງ ຕ່າງກັນແນວໃດ ? 69
໙. ຂັບ-ລຳ-ເພງລາວໂດ່ງດັງໃນແດນສະຫຍາມ 71
໑໐. ເປັນຫຍັງເພງລາວເດີມຈຶ່ງຂຶ້ນຕົ້ນດ້ວຍຄຳວ່າ"ລາວ" 77
໑໑. ແຄນມໍລະດົກຂອງລາວ ໄທຍບໍ່ເຄີຍຖືວ່າເປັນຂອງຕົນ 81

໑໒. ຂັບ-ລຳ ເພງລາວບໍ່ເສື່ອມສູນ 85
໑໓. ເພງລາວດວງເດືອນໃຜແຕ່ງ ? 89
໑໔. ເພງລາວເດີມ ພໍ່ແມ່ ເພງລາວສະໄໝ 97
໑໕. ເພງຮ້ອງ 107

**ຊົນຊາດລາວຮູ້ຈັກ ຮ້ອງລຳທຳເພງ** ມາແລ້ວບໍ່ຕ່ຳກວ່າ 3.000 ປີ ໂດຍໃຊ້ ຄຳວ່າ "**ຂັບ**" ແລະ "**ຮ້ອງ**" ຫຼື "**ຂັບຮ້ອງ**" ແລະ "**ຟ້ອນ**"- ໃຊ້ ຄຳວ່າ"**ໝໍ**" ຍົກຍ້ອງ ແກ່ຜູ້ຫຼິ້ນເຊັ່ນ **ໝໍຂັບ ໝໍລຳ ໝໍແຄນ** ຕໍ່ມາຈຶ່ງໃຊ້ຄຳວ່າ "**ລຳ**" ແລະ "**ເພງ**" "**ດົນຕີ**" ແລະຮຽກຜູ້ຫຼິ້ນວ່າ "**ນັກ**" ນັກຮ້ອງ ນັກດົນຕີ ນັກສະແດງ

*200 ປີກ່ອນ ຂັບ-ລຳ-ເພງ ລາວ ໂດ່ງດັງຫຼາຍໃນອານາຈັກສະຫຍາມ ແລະ ທາງການສະຫຍາມບໍ່ເຄີຍຖືວ່າແຄນເປັນດົນຕີຂອງຕົນເລີຍ ກົງກັນຂ້າມ ເຂົາກັບຖືວ່າແຄນເປັນຂອງລາວ ແລະເປັນຂອງເຂັດຂວງ ທີ່ໃດມີການເປົ່າ ແຄນທີ່ນັ້ນຟ້າແລ້ງ ຝົນບໍ່ຕົກ.*

*"...ຟ້ອນລາຍ ຂັບລຳເຊີ້ງ ໃນຂະບວນແຫ່ອັນຄຶກຄື້ນ ມະໂຫລານ ຂອງພິທີ ກຳໃດໜຶ່ງ"* ທີ່ໜ້າຄ້ອງບ້າງ ຊຶ່ງທ່ານ ຫູມພັນ ຣັດຕະນະວົງ ຢາກກ່າວເຖິງ ໃນປຶ້ມ 2000 ປີແຫ່ງສຽງແຄນລາວນັ້ນ ຄົງຈະບໍ່ແມ່ນພິທີໃດອື່ນນອກໄປ ຈາກພິທີແຫ່ຈູດບັ້ງໄຟ ເພື່ອຂໍຝົນຈາກພະຍາແຖນ

# ຄຳຊົມເຊີຍ

ດ້ວຍຄວາມປິຕິຊົມຊື່ນຢ່າງຍິ່ງ ທີ່ເຫັນປຶ້ມຮິບໂຮມຜົນງານການຄົ້ນຄວ້າທາງດ້ານສິລະປະດົນຕຣີ ເຊິ່ງປະກອບໄປດ້ວຍການຮ້ອງ ຂັບລຳ ທຳເພງ ຂອງເຊື້ອຊາດບັນດາເຜົ່າລາວ ທີ່ມີພູມລຳເນົາໃນເຂດແຄ້ວນສຸວັນນະພູມ ຫຼືທີ່ເອີ້ນວ່າແຜ່ນດິນຄຳເຊິ່ງມີ ປະຫວັດສາດອັນຍາວນານມາຫຼາຍພັນປີ ຖ້າເວົ້າທາງດ້ານ ສິລະປະດົນຕຣີທີ່ຍຶດຖື ເຄື່ອງເປົ່າທີ່ໃຫ້ສຽງອັນໄພເລາະອອນຊອນ ຄ້າຍຄືງກັບສຽງນົກກໍລະວິກ ຊຶ່ງເຊື້ອຊາດລາວເອີ້ນຊື່ວ່າ ແຄນ. ແຄນນີ້ມີປະຫວັດທີ່ຕິດພັນກັບວິຖີຊີວິດຂອງທຸກຊົນຊາດ ໃນແຖບນີ້ ຖ້າຈະຕ່າງກໍແຕ່ພຽງລັກສະນະຮູບຮ່າງເທົ່ານັ້ນ. ບໍ່ວ່າຊົນຊາດໃດຈະເຈີນ, ຈະຂັບ, ລຳ ກໍມັກຈະຖືເອົາສຽງແຄນ ເປັນຫຼັກໃນການນຳຫຼື ຕາມ.

ການແກະຮອຍຕາມຫາທີ່ມາຂອງບັນດາສຽງເສບ ແລະສຽງຂັບລຳຕ່າງໆ ທີ່ໄມ້ຈັນ ໄດ້ທຸ່ມແຮງ ແລະພະລັງດ້ານສິລະປະສາດ ການຂີດຂຽນໃຫ້ກົມກືນ ເປັນເລື່ອງເປັນລາວ ລະຫວ່າງທີ່ໄປທີ່ມາຂອງບົດຄົ້ນຄວ້າໃນຄັ້ງນີ້ ຈຶ່ງເປັນເລື່ອງທີ່ຄວນຊື່ນຊົມຍິນດີເປັນຢ່າງຍິ່ງ.

ເທົ່າທີ່ເຫັນມາໃນ ສປປ.ລາວເຮົາ ນັບວ່າມີນັກຄົ້ນຄວ້າທາງດ້ານສິລະປະດົນຕຣີນີ້ມີຈຳກັດຫຼາຍ. ໄມ້ຈັນ ຫຼື ທັງເຫີນ ຂຸນພິທັກ ເຊິ່ງຫຼາຍທ່ານຮູ້ຈັກໃນນາມນັກຂ່າວ ນັກຂຽນ, ນັກກະວີ ແລະບັນນາທິການວາລະສານທ່ຽວເມືອງລາວມີຄວາມຫ້າວຫັນ ບວກກັບພອນສະຫວັນທາງດ້ານອັກສອນສາດ ແລະມີມານະຈິດໃຫ້ກັບງານຄົ້ນຄວ້າມາເປັນເວລາດົນນານ ຈຶ່ງເປັນທີ່ງ່າຍສຳລັບທ່ານ ໃນການທີ່ຈະຊອກຫາແຫຼ່ງຂໍ້ມູນ

ທີ່ຕັ້ງປະເດັນ ມາຂຽນອອກໃຫ້ທ່ານຜູ້ອ່ານໄດ້ຮູ້ເຖິງ ປະຫວັດຄວາມເປັນມາຂອງສິລະປະດົນຕຣີ, ການຟ້ອນ ລຳ ທຳເພງ ທີ່ຄົນລາວເຮົາສືບສານຍານສົ່ງຕໍ່ເຊັ່ນລູກເຊັ່ນຫຼານ ຈົນກາຍເປັນມໍລະດົກ ຕົກທອດທາງດ້ານສິລະປະ ວັດທະນະທຳ ທີ່ມີເອກະລັກ ສະເພາະຂອງຊາດຕົນ .

ໃນນາມ ປະທານ ສະໂມສອນສິລະປະ ສຽງແຄນລາວ ແລະ ໝໍລຳໝໍແຄນ ຂ້າພະເຈົ້າເຫັນວ່າໜັງສືເຫຼັ້ມນີ້ ນັບວ່າເປັນເອກະສານທີ່ດີເລີດທາງດ້ານເນື້ອຫາໃນເຊີງຄົ້ນຄວ້າ ແລະສອດຄ່ອງກັບທາງດ້ານວິຊາການ, ສາມາດໃຊ້ເປັນເອກະສານອ້າງອີງໄດ້. ເອກະສານຄົ້ນຄວ້າເຫຼັ້ມນີ້ ແມ່ນເໝາະສົມ ສຳລັບນິສິດນັກສຶກສາ ທີ່ຮຽນຂະແໜງດົນຕຣີ, ສິລະປະການຟ້ອນ, ການສະແດງຕ່າງໆ ຕະຫຼອດເຖິງນັກຮ້ອງ ນັກສະແດງ ຜູ້ແຕ່ງກອນຂັບ, ກອນລຳ ຜູ້ເຮັດວຽກງານກ່ຽວກັບສິລະປະການສະແດງລວມທັງຜູ້ສົນໃຈດ້ານປະຫວັດສາດສັງຄົມທົ່ວໄປ, ແລະພິເສດ ບັນດາໝໍລຳ ໝໍແຄນທັງຫຼາຍຄວນມີປຶ້ມນີ້ໄວ້ອ່ານເພື່ອຈະໄດ້ຮູ້ຢ່າງເລິກເຊິ່ງເຖິງເຄົ້າອາຊີບຂອງຕົນວ່າ ແຄນທີ່ຕົນອົມເຕົ້າ ເປົ່າອອກສຽງຢູ່ນັ້ນມີປະຫວັດ ຄວາມເປັນມາຄືແນວໃດ ແລະມີມານານເທົ່າໃດປີແລ້ວ .

ກົງເດືອນ ເນດຕະວົງ

ປະທານ ສະໂມສອນ ສິລະປະສຽງແຄນລາວ



# ຄຳນຳຂອງສຳນັກພິມ

ຂັບລຳ ເພງ ຟ້ອນ ໂຂນ ລະຄອນ ແລະສິລະປະການສະແດງທັງມວນ ລ້ວນແຕ່ແມ່ນວາດຈັງຫວະທ່ານອງກະບວນການແຫ່ງຊີວິດທີ່ເກີດມາຈາກຄວາມຮູ້ສຶກນຶກຄິດ ແລະອາລົມຈິດຕ່າງໆຂອງຄົນໃນສັງຄົມເຊັ່ນ: ມ່ວນຊື່ນ ອອນຊອນ ຕື່ນເຕັ້ນ ຫ້າວຫານ ຫຼື ໂສກເສົ້າອາວອນ.

ໃນເມື່ອມັນ ເປັນແນວນັ້ນ ຫາກພວກເຮົາ ສຶກສາເບິ່ງບົດຂັບ ບົດລຳ ບົດເສບ ບົດຟ້ອນ ບົດລະຄອນ.... ເຮົາກໍຈະຮູ້ເຖິງສະພາບຊີວິດຈິດໃຈຂອງຄົນໃນແຕ່ລະຍຸກແຕ່ລະສະໄໝໄດ້ເປັນຢ່າງດີ ທັງນີ້ເພາະໃນທຸກຈັງຫວະຂອງຊີວິດ ຂອງແຕ່ລະຄົນ ແລະສັງຄົມລ້ວນແຕ່ມີບົດເພງບັນເລງຢູ່ເປັນປະຈຳ. ຄວາມຮູ້ທີ່ໄດ້ຈາກອັນນີ້ຄົງຈະຊ່ວຍໃຫ້ເຮົາຮ້ອງລຳທຳເພງ ໄດ້ມ່ວນຂຶ້ນກວ່າເກົ່າ.

ສຳນັກພິມນັກປະພັນລາວ ພູມໃຈສະເໜີຜົນງານສາລະຄະດີ ຊິ້ນແຮກ ທີ່ໄດ້ຜ່ານການບົ່ມເພາະ ຂອງນັກຂຽນຄົນໜຶ່ງທີ່ຊື່ "ໄມ້ຈັນ" ຊຶ່ງໃນຊຸດນີ້ຈະມີຈຳນວນ 3 ເຫຼັ້ມຄື **"ລາວ: ວັດທະນະທຳເຂົ້າໜຽວ "ໄມ້ຈັນ-ວຽງຈັນ-ບຸຣີຈັນ"** ແລະ **"ຂັບ-ລຳ-ເພງລາວ ມາແຕ່ໃສ ?"** ດັ່ງທີ່ແບ ຢູ່ຕໍ່ໜ້າຂອງທ່ານຜູ້ອ່ານນີ້

ຜູ້ອ່ານທັງຫຼາຍທີ່ເຄີຍຕິດຕາມໜັງສືພິມ ກອງທັບປະຊາຊົນລາວ ໜັງສືພິມວຽງຈັນໃໝ່ ວາລະສານວັນນະສິນ ແລະວາລະສານທ່ຽວເມືອງລາວ ຄົງເຄີຍໄດ້ອ່ານຜົນງານ ຂອງນັກຂ່າວ ນັກຂຽນ ນັກກະວີ ຄົນໜຶ່ງທີ່ມີນາມປາກກາວ່າ **"ນັກຮົບ"** **"ນິວັດ ວົງສິນ"** ແລະ **"ໄມ້ຈັນ"** ມາແລ້ວນັບແຕ່ປີ 1981ເປັນຕົ້ນມາ. ໂດຍສະເພາະ ໃນຄໍລຳ "ນານາສາລະ" ຂອງວຽງຈັນໃໝ່ ໃນລະຫວ່າງປີ 1995-1997

ຜົນງານຂອງນັກຂຽນຜູ້ນີ້ ມີມາກມາຍ ທັງໃນຮູບແບບຂອງບົດຂ່າວ ບົດຄວາມ ບົດສາຣະຄະດີ ແລະບົດກະວີ ແຕ່ກໍບໍ່ເຄີຍປາກົດອອກມາໃນຮູບເຫຼັ້ມ ປຶ້ມດ່ຽວຈັກເທື່ອ ມີກາບກອນພຽງ 2-3 ບົດ ເທົ່ານັ້ນທີ່ຖືກພິມຢູ່ໃນໂຮມເຫຼັ້ມ ກັບ ຜົນງານຂອງຄົນອື່ນ.

ໃນປຶ້ມເຫຼັ້ມແຮກນີ້ ນັກຂຽນ ໄດ້ນຳສະເໜີຜົນ ຂອງການຄົ້ນຄວ້າ ແລະ ໄຈ້ ແຍກໃຫ້ເຮົາເຫັນຂໍ້ມູນຄວາມຈິງຫຼາຍຢ່າງຂອງບັນຫາທີ່ເຊື່ອງຊ້ອນຢູ່ໃນ ຄຳວ່າ **"ຂັບ-ລຳ-ເພງ"** ຊຶ່ງປົກກະຕິ ຄົນທັງຫຼາຍຄົງບໍ່ຄ່ອຍໃຫ້ຄວາມສົນໃຈ.

ດ້ວຍສັບພາສາ ແລະລີລາ ທີ່ເປັນເອກະລັກ ຢ່າງມີລົດຊາດ ແລະເປັນທີ່ ເຂົ້າໃຈງ່າຍ ພວກເຮົາເຊື່ອໝັ້ນວ່າ ເມື່ອໄດ້ອ່ານຜົນງານຊຸດນີ້ແລ້ວ ທ່ານຈະຮູ້ສຶກ ພາກພູມໃຈທີ່ໄດ້ປັ້ນເຂົ້າໜຽວ ໄດ້ສູດດົມກິ່ນຫອມຂອງໄມ້ຈັນ ແລະຮັກໃນສຽງ ຂັບ ສຽງລຳ ສຽງແຄນ ມາກຍິ່ງຂຶ້ນ.

ສຳນັກພິມນັກປະພັນລາວ ຫາກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ຂໍສະແດງ ຄວາມຂອບໃຈມາຍັງທ່ານ ທີ່ໄດ້ແວ່ເຂົ້າມາໄຂສຳນັກພິມນັກປະພັນລາວ ຊົມ ອຸທະຍານ ແຫ່ງອັກສອນສິນ ດົມເອົາກິ່ນອາຍຂອງນ້ຳມຶກ ແລະສຳຜັດຕົວອັກ ສອນອັນເປັນຜົນງານຊຸດແຮກ ທັງຂອງນັກຂຽນ ແລະຂອງສຳນັກພິມນັກປະພັນ ລາວ. ພວກເຮົາຈະເລືອກເຟັ້ນຜົນງານຄຸນະພາບຂອງນັກຂຽນຜູ້ນີ້ ແລະຜູ້ອື່ນໆ ມາສະເໜີ ຕໍ່ທ່ານຜູ້ອ່ານເປັນລຳດັບຕໍ່ໄປ

ສຳນັກພິມນັກປະພັນລາວ



# ໄຊຄຳຄອນ

ກ່ອນຈະໄດ້ປຶ້ມຫົວນີ້...

ໃນຕົ້ນປີ 2011 ຂ້ອຍໄດ້ຖືກ **ອະນຸສອນ ສິຣິສັກດາ** ປະທານບໍລິສັດ ລາວ ອາຣ໌ທ ມີເດຍ ຊຶ່ງເປັນເພື່ອນທີ່ຮູ້ຈັກກັນມາແຕ່ຫຼາຍປີກ່ອນ ສະໄໝທີ່ລາວກຳລັງກະກຽມສ້າງຕັ້ງບໍລິສັດລາວອາຣ໌ທ ມີເດຍ ຊວນໄປຮ່ວມເຮັດວຽກເພື່ອດຳເນີນໂຄງການ **ສານຝັນໃຫ້ເປັນດາວ** ຄັ້ງທີໜຶ່ງ (Lao Dream Star Season1) ອັນເປັນໂຄງການປະກວດນັກຮ້ອງ ນັກສະແດງຊາວໜຸ່ມໃນທົ່ວປະເທດ.

ເຫດທີ່ຕ້ອງໃຊ້ຄຳວ່າ "ຂ້ອຍ" ໃນທີ່ນີ້ ຊຶ່ງແຕກຕ່າງຈາກຫຼາຍຄົນ ທີ່ມັກໃຊ້ຄຳວ່າ "ຂ້າພະເຈົ້າ" ເພາະເຫັນວ່າ"ຂ້ອຍ"ເປັນສັບພະນາມທີ່ຄົນທຳມະດາສາມັນ ໄທເຮົາເຈົ້າຂ້ອຍໃຊ້ກັນທົ່ວໄປສ່ວນຄຳວ່າ "ຂ້າພະເຈົ້າ" ເປັນຄຳທີ່ໃຊ້ໃນທາງລັດທາງຫຼວງເພິ່ນ. ໃນການຂຽນໜັງສືນີ້ ຂ້ອຍບໍ່ໄດ້ຢູ່ໃນຖານະທາງການອັນໃດ ແລະເຈົ້າຜູ້ອ່ານກໍຄືງຢູ່ໃນຖານະຊາວບ້ານທຳມະດາ ດັ່ງນັ້ນການໃຊ້ຄຳວ່າ "ຂ້ອຍ" ແລະ "ເຈົ້າ" ກໍຈຶ່ງເໝາະສົມຕາມຖານະຊົນແລ້ວ

ເມື່ອຕ້ອງເຮັດວຽກ ກັບການປະກວດຮ້ອງເພງ ຂ້ອຍຈຶ່ງຈຳເປັນຕ້ອງມີຄວາມເຂົ້າໃຈກ່ຽວກັບເລື່ອງເພງ ຄຳຖາມທຳອິດ ທີ່ຂ້ອຍຕັ້ງຂຶ້ນເພື່ອຫາຄຳຕອບ ກໍແມ່ນ **"ເພງ"** ແມ່ນຫຍັງ ? ມັນມາແຕ່ໃສ ?

ຈາກນັ້ນກໍມີຫຼາຍຄຳຖາມພາກັນຊໍ່ຊ້ອງ ເຂົ້າມາໃສ່ພໍປານປາໜ້າໄຊ ເພື່ອໃຫ້ຂ້ອຍຕອບ ເປັນຕົ້ນວ່າ **"ຂັບ-ລຳ"** ມາແຕ່ໃສ ? ເພງມາແຕ່ໃສ ? ເພງລາວເດີມ ເພງລູກທົ່ງ-ບ້ານນາ ເພງປະຕິວັດ ເພງຊາວໜຸ່ມດອກໄມ້ແດງ ເພງປ໊ອບ ເພງຣ໊ອກ...ແມ່ນແນວໃດ ? ບັນດາເພງລາວເດີມ ເປັນຫຍັງຈຶ່ງມີຄຳວ່າ **"ລາວ"** ຂຶ້ນຕົ້ນ ເພງລາວແພນ ເພງລາວດວງເດືອນ ແມ່ນໃຜແຕ່ງ ?

ເພື່ອຕອບຄຳຖາມເຫຼົ່ານີ້ ຂ້ອຍທັງອ່ານໜັງສື ປະເພດປະຫວັດສາດ ພາສາ ວັນນະຄະດີ ວາຣະສານຕ່າງໆ ແລກປ່ຽນຄວາມເຫັນກັບຜູ້ຊົງຄຸນະວຸດທິ ແລະຊອກຫາຂໍ້ມູນທາງອິນເຕີເນັດ ຍິ່ງໝົ້ນເຂົ້າເລິກເທົ່າໃດ ຂ້ອຍກໍແຮ່ງພົບວ່າ ຂັບ-ລຳ-ເພງຮ້ອງ ແລະ ສິລະປະການສະແດງທັງມວນ ລ້ວນມີສະເໜດືງ ດູດໃຈ ໃຫ້ຫຼົງໄຫຼ ເພາະມັນກ່ຽວ ພັນເຖິງເຜົ່າພັນ ປະຫວັດສາດ ພາສາ ຈິດຕະສາດສັງຄົມ ແລະຫຼາຍໆຢ່າງເກີນ ກວ່າທີ່ຄາດຄິດ. ຜົນຈາກການດັ້ນດົ້ນ ຂົນຂວາຍ ຂ້ອຍໄດ້ ພົບຂໍ້ມູນຫຼາຍຢ່າງທີ່ໃຫ້ຄວາມ ກະຈ່າງແຈ້ງໃນເລື່ອງນີ້ ເມື່ອຮູ້ເຫັນແລ້ວໃນຖານະ **"ນັກຂຽນ"** ຜູ້ໜຶ່ງຂ້ອຍຈຶ່ງຮວບ ຮວມມາຈັດຮຽບຮຽງ ແລະຂຽນອອກເປັນລຳດັບ ເຜີຍແຜ່ຕໍ່ສາທາລະນະຊົນ.

ທຳອິດຂ້ອຍ ໄດ້ໃຫ້ຝ່າຍ ໄອທີ (IT) ຂອງໂຄງການນຳເອົາເລື່ອງນີ້ 2-3 ຕອນທຳອິດ (ໂພສ) ຂຶ້ນເວັບໄຊຂອງໂຄງການ www.laodreamstar.com ຂະນະດຽວກັນຂ້ອຍກໍໂພສລົງໃນເວັບໄຊ www.bailane.com/inlao.net ແລະ ຕໍ່ມາຂ້ອຍກໍສົ່ງໄປພິມລົງໜ້າໜັງສືພິມວຽງຈັນໃໝ່ ໂດຍແບ່ງເປັນຕອນໆ ນັບແຕ່ ປາຍເດືອນກຸມພາ 2011 ເປັນຕົ້ນມາ. ແລະນີ້ກໍເປັນຈຸດໃຫ້ກຳເນີດນາມປາກກາ ຫຼືນາມແຝງໃໝ່ **"ໄມ້ຈັນ"** ຂອງຂ້ອຍ ຈາກເດີມທີ່ເຄີຍໃຊ້ແຕ່ **"ນິວັດ ວົງສິນ"** ເຫດ ທີ່ຕ້ອງໃສ່ນາມປາກກາ ກໍຍ້ອນວ່າບໍ່ຢາກເປີດເຜີຍຕົນເອງທາງເວັບໄຊ.

ການລົງໃນເວັບໄຊນັ້ນມີຂໍ້ດີ ໂດຍສະເພາະທີ່ www.bailane.com/inlao.net ເພາະມີຜູ້ເຂົ້າໄປອ່ານຫຼາຍ ແລະມີຜູ້ປະກອບຄວາມເຫັນໃຫ້ນຳ ທຸກຄຳ ເຫັນລ້ວນຊົມເຊີຍ ສ່ວນການລົງພິມທາງວຽງຈັນໃໝ່ ນີ້ກໍຍິ່ງດີຕື່ມ ເພາະທັງໄດ້ ເຜີຍແຜ່ຜົນງານ ແລະໄດ້ເງິນນຳ ຄືປະມານຕອນລະຫ້າສິບພັນກີບອີກດ້ວຍ ທີ່ນັ້ນ ບໍ່ພໍຍັງມີຜູ້ອ່ານຄົນໜຶ່ງສະແກນເອົາບົດທີ່ລົງໃນວຽງຈັນໃໝ່ນັ້ນ ໄປໂພສຂຶ້ນເວັບ ໄຊໃບລານອີກເປັນຮອບທີສອງ

ບົດຂຽນທີ່ໂພສຂຶ້ນເວບໄຊກໍດີ ລົງພິມໃນວຽງຈັນໃໝ່ກໍດີ ລ້ວນແຕ່ເປັນ ພຽງຜົນງານເບື້ອງຕົ້ນ ເນື້ອໃນ ແລະຂໍ້ມູນບາງອັນກໍຍັງບໍ່ທັນລະອຽດ ສ່ວນໃນ ປຶ້ມຫົວນີ້ ຂ້ອຍໄດ້ປັບປຸງເພີ່ມເຕີມຫຼາຍ ເຊັ່ນໃນທຳອິດ ຂ້ອຍພຽງແຕ່ສັນນິດຖານ ວ່າ **"ເພງ"** ມາຈາກພາສາຂະແມທໍ່ນັ້ນ ແຕ່ໃນປຶ້ມນີ້ ມີຂໍ້ມູນຈາກຜູ້ຮູ້ ທີ່ຊີ້ຊັດວ່າມັນ ມາຈາກພາສາຂະແມນັ້ນແທ້ອີຫຼີ !.

ຂ້ອຍເຫັນ ແລະເປັນເອກະພາບນຳ ນັກປະຫວັດສາດ ນັກຄົ້ນຄວ້າຫຼາຍທ່ານເຊັ່ນ: ໜຸມພັນ ຣັດຕະນະວົງ, ສຸຈິດ ວົງເທດ ນັກຂຽນໄທຍ ທີ່ເຫັນວ່າ **ຊົນຊາດລາວ-ໄທເຮົາ ຮູ້ຈັກຮ້ອງລຳທຳເພງມາແລ້ວບໍ່ຕ່ຳກວ່າ 3.000 ປີ.**

ພິເສດ ຂ້ອຍຍັງເຫັນຕື່ມອີກວ່າ ໃນການຮ້ອງລຳທຳເພງນີ້ ແຕ່ເດີມລາວເຮົາໃຊ້ແຕ່ຄຳວ່າ "**ຂັບ**" ແລະ "**ຮ້ອງ**" ຫຼື "**ຂັບຮ້ອງ**" ແລະຄຳວ່າ"**ຟ້ອນ**" "**ເຕັ້ນ**"ຂະນະດຽວກັນກໍໃຊ້ຄຳວ່າ "**ໝໍ**" ເປັນຄຳຍົກຍ້ອງແກ່ຜູ້ຫຼິ້ນ ຫຼືຜູ້ສະແດງເຊັ່ນ ໝໍລຳ ໝໍແຄນ ຕໍ່ມາຈຶ່ງປາກົດມີການໃຊ້ຄຳວ່າ "**ລຳ**" ແລະ "**ເພງ**" "**ດົນຕີ**" ແລະໃຊ້ຄຳວ່າ "**ນັກ**" ຄື ນັກຮ້ອງ ນັກດົນຕີ ນັກສະແດງ ໃນພາຍຫຼັງ.

ຍິ່ງໄປກວ່ານັ້ນແມ່ນໄດ້ເຫັນວ່າໃນ ສະໄໝເມື່ອ 200 ປີກ່ອນ ຂັບ-ລຳ-ເພງລາວ ໂດ່ງດັງຫຼາຍໃນອານາຈັກສະຫຍາມ ແລະທາງການ**ສະຫຍາມບໍ່ເຄີຍຖືວ່າແຄນເປັນເຄື່ອງເສບ(ດົນຕີ)ຂອງຕົນເລີຍ** ກົງກັນຂ້າມເຂົາກັບຖືວ່າ **ແຄນເປັນຂອງລາວ ແລະເປັນຂອງເຂັດຂວງ ທີ່ໃດມີການເປົ່າແຄນ ທີ່ນັ້ນຟ້າແລ້ງ ຝົນບໍ່ຕົກ** ອີກດ້ວຍ.

ເນື້ອໃນທັງໝົດຂອງປຶ້ມນີ້ ບໍ່ແມ່ນຜົນງານການປະດິດຄິດແຕ່ງ ມັນເປັນພຽງການນຳເອົາຂໍ້ມູນເລັກໆ ນ້ອຍໆ ເທົ່າທີ່ຂ້ອຍຄິດວ່າມີຄ່າຈາກຫຼາຍແຫຼ່ງ ຊຶ່ງທ່ານຜູ້ຮູ້ໄດ້ຂຽນໄວ້ແລ້ວມາຕິດ ມາຕໍ່ມາຮ້ອຍຮຽງລວມໄວ້ໃນທີ່ດຽວກັນ ເຂົ້າທຳນອງວ່າເກັບກຸ້ງເກັບຊິວມາໝົກມາຫໍ່ ພໍໄດ້ຈ້ຳ ໄດ້ບ່າຍ ຊຶ່ງອັນໃດມາຈາກທີ່ໃດນັ້ນຂ້ອຍກໍໄດ້ບອກ ໄວ້ເທົ່າທີ່ສາມາດບອກໄດ້ ແລະໄດ້ອະທິບາຍເພີ່ມເຕີມພໍໃຫ້ເຂົ້າໃຈໄດ້ຕື່ມທໍ່ນັ້ນ.

ຂ້ອຍບໍ່ໄດ້ຫຍຸ້ງຍາກໃດໆ ໃນການຂຽນ ການອອກແບບ-ຈັດໜ້າປຶ້ມເລີຍ ເພາະມີບົດຮຽນໃນການຈັດພິມປຶ້ມມາແລ້ວບໍ່ຕ່ຳກວ່າ 10 ປີ ແຕ່ໜັກໜ່ວງຫຼາຍແມ່ນການຫາເງິນມາເປັນຄ່າພິມ ແລະການຫາທາງຂາຍປຶ້ມນີ້ ເພື່ອເອົາທຶນຄືນມາໄວ້ພິມປຶ້ມເຫຼັ້ມໃໝ່

ດັ່ງນັ້ນ ຫາກວ່າເຈົ້າໄດ້ປຶ້ມນີ້ມາອ່ານດ້ວຍການຢືມ ຫຼືດ້ວຍເງື່ອນໄຂຢ່າງອື່ນ ຂ້ອຍຂໍຂອບໃຈທີ່ເຈົ້າສົນໃຈຢາກອ່ານມັນ ຖ້າຫາກໄດ້ມາດ້ວຍການຊື້ຂໍໃຫ້ຮັບຮູ້ດ້ວຍເຖີດວ່າຂ້ອຍຂໍຂອບໃຈເຈົ້າສອງເທື່ອ ແລະຖ້າຫາກຈະກະລຸນາ ຊື້ຕື່ມອີກເພື່ອເປັນຂອງຂວັນແກ່ໃຜຜູ້ໜຶ່ງ ໃຫ້ໂຮງຮຽນໃດໜຶ່ງ ຫຼືການຈັດຕັ້ງໃດໜຶ່ງຂ້ອຍຂໍຍໍມືນົບຄາລະວະຕໍ່ນ້ຳໃຈອັນປະເສີດຂອງເຈົ້າມານະທີ່ນີ້ດ້ວຍ.

ຂ້ອຍຫວັງວ່າ ປຶ້ມຫົວນີ້ ຈະຊ່ວຍໃຫ້ເຈົ້າ ແລະຜູ້ອ່ານທຸກຄົນໄດ້ຮັບຮູ້ເຂົ້າໃຈ ແລະສຳນຶກໃນພູມປັນຍາຂອງບັນພະບຸລຸດ ທີ່ໄດ້ສ້າງສັນສິ່ງດີງາມໄວ້ ເປັນມໍລະດົກໃຫ້ແກ່ພວກເຮົາ ແລະຫວັງວ່າພວກເຮົາ ແລະລູກຫຼານຈະມີກຳລັງໃຈ ມີສະຕິປັນຍາ ພໍທີ່ຈະພ້ອມກັນປົກປັກຮັກສາ ສືບທອດເສີມຂະຫຍາຍມູນເຊື້ອການຂັບ ລຳ ຟ້ອນ ເປົ່າແຄນ ຮ້ອງເພງ ເສບດົນຕີ ແລະສິລະປະການສະແດງອື່ນໆ ໃຫ້ກ້າວໜ້າ ໝັ້ນຄົງ ຢູ່ຄຽງຄູ່ກັບຄົນເຜົ່າພັນລາວເຮົາຕະຫຼອດໄປ.

ຫາກບໍ່ໄດ້ຮ່ວມເຮັດວຽກ ກັບອະນຸສອນ ສິຣິສັກດາ ໃນໂຄງການ ສານຝັນໃຫ້ເປັນດາວ ຂ້ອຍຄົງບໍ່ມີຄວາມກະຕືລືລົ້ນ ຢາກຊອກຮູ້ກ່ຽວກັບເລື່ອງລຳເລື່ອງເພງ ຫາກບໍ່ໄດ້ອ່ານປຶ້ມກວ່າ 2000 ປີແຫ່ງສຽງແຄນລາວ ຂອງທ່ານ **ທຸມພັນ ຣັດຕະນະວົງ** ສິລະປິນແຫ່ງຊາດ ສາຂາວັນນະກຳ ແລະຫາກບໍ່ໄດ້ຂໍ້ມູນຫຼາຍອັນຈາກປຶ້ມ ແລະບົດຂຽນຂອງທ່ານອື່ນໆ ມາຕື່ມຟືນຕື່ມໄຟ ໃຫ້ປາຍປາກກາປຶ້ມຫົວນີ້ຄົງຈະບໍ່ເກີດຂຶ້ນ

ດັ່ງນັ້ນ ຈຶ່ງຂໍສະແດງຄວາມສຳນຶກໃນບຸນຄຸນຂອງພວກທ່ານ ໄວ້ນະທີ່ນີ້ພິເສດຂໍຂອບໃຈ ຕໍ່ທ່ານ ຕຸລາໄຊ ວໍລະຈິດ ປະທານບໍລິສັດດາວສະຫວັນ ພ້ອມຄອບຄົວທີ່ໄດ້ໃຫ້ການສະໜັບສະໜູນການພິມ ສຳນັກພິມນັກປະພັນລາວ ໂຮງພິມມັນທາຕຸລາດ ແລະທຸກຄົນທີ່ມີສ່ວນຮ່ວມໃນການເຮັດໃຫ້ປຶ້ມຫົວນີ້ໄດ້ມາແບໜ້າຢູ່ຕໍ່ຕາຜູ້ອ່ານນະທີ່ນີ້

ດ້ວຍຄວາມຮັກ ແລະສັດທາໃນພາສາ-ວັນນະຄະດີລາວ

ໄມ້ຈັນ

ບ້ານໂພນປ່າເປົ້າ ນະຄອນຫຼວງວຽງຈັນ

10 ກໍຣະກົດ 2011



## ແກ່ນຈັນ

ຕົວອັກສອນ ກອນກະວີ ທີ່ສ້າງມາດ້ວຍປັນຍາ ແລະຍາດເຫື່ອ
ອາດເປັນພຽງໜຶ່ງເມັດຊາຍ ທີ່ຫຼາຍເຫຼືອເທິງດອນຈັນ
ເປັນໜຶ່ງດວງດອກຈຳປາ ຫອມພຽງສັ້ນຂອງໜຶ່ງວັນ
ກໍ່ຊ່າງມັນ ຈິດວິນຍານ ນັກປະພັນກັ່ນກອງມາ

ສຽງດົນຕີ ສຽງປາກກາ ອາດເປັນພຽງສຽງຊັບຊິ່ມທີ່ແຜ່ວເບົາ
ແປວແສງທຽນທີ່ຈູດໄຕ້ ອາດສ່ອງເຫັນພໍເປັນເງົາ
ສີຂອງນຶກທີ່ຂຽນມາ ອາດຈະຈາງເປັນສີເທົາ
ກໍ່ຂໍເອົາເປັນບັນນາ ສາທຸຊົນຈົນເທົ້າກາລະນານ





*ພໍ່ເຖົ້າ ຊຽງວັນນາ ອາຍຸ 93 ປີ (ປີ 2012) ບ້ານໝັຽງ ເມືອງແປກ ແຂວງຊຽງຂວາງ*



# ໑

## ຄຳວ່າ "ຂັບ-ລຳ-ຟ້ອນ" ມາແຕ່ໃສ ? ມີຄວາມໝາຍແນວໃດ ?

*ຂັບ ຫຼື ລຳ ຫຼື ເພງ ຟ້ອນ ແລະເຄື່ອງເສບ (ດົນຕີ) ເກີດມີໃນສັງຄົມຊາວລາວເຮົາມາແຕ່ບູຮານະການ ມັນມີບົດບາດ ອິດທິພົນສູງສົ່ງຕໍ່ຊີວິດຈິດໃຈຂອງບຸກຄົນ ການຈັດຕັ້ງ ສະຖາບັນ ແລະສັງຄົມຈົນບໍ່ສາມາດຂາດໄດ້ ກ່າວຄືໄດ້ຫຼໍ່ລ້ຽງ ຂັບກ່ອມຊີວິດ ຈິດວິນຍານຂອງຄົນລາວໃຫ້ມີເອກະລັກ ລັດຊາດ ບັນຍາກາດ ວາດວິຖີຊີວິດທີ່ອຸດົມສົມບູນ.*

ຫ້າມຈຳໜ່າຍ

*ຂັບ ລຳ ເພງດົນຕີ ເດີມທີມີພຽງປະເພດພິທີກຳ ໄລຍະຕໍ່ມາຈຶ່ງມີປະເພດບໍ່ແມ່ນພິທີກຳ. ແຕ່ລະປະເພດ ກໍມີຮູບແບບ ມີພະລັງມີສະເໜ່ ຖືກນຳໃຊ້ ໄດ້ຮັບຄວາມນິຍົມແຕກຕ່າງກັນໄປ ແລະໄດ້ຮັບການປົກປັກຮັກສາ ສືບທອດພັດທະນາເລື້ອຍໆ ມາ*

*ວິຖີຊີວິດຂອງຄົນໃນໂລກນີ້ ມີຄວາມໝາຍ ມີບັນຍາກາດຄຶກຄື້ນ ລື່ນເລີງ ກໍດ້ວຍສຽງລຳ ສຽງເພງ ສຽງດົນຕີ. ຫາກແມ່ນຂາດເສຍສິ່ງນີ້ແລ້ວ ຄົງຈະງຽບເຫງົາເສົ້າໂສກພິລຶກ.*

ໃນການຮ້ອງລຳທຳເພງ ແຕ່ເດີມລາວເຮົາຄົງຈະໃຊ້ແຕ່ຄຳວ່າ **"ຮ້ອງ"** **ແລະ "ຂັບ"** ໂຮມກັນຮຽກວ່າ **"ຂັບຮ້ອງ"** ສ່ວນການສະແດງລີລາ ທ່າທາງປະກອບການຂັບຮ້ອງນັ້ນຮຽກວ່າ "ເຕັ້ນ" ແລະ **"ຟ້ອນ"** ຕໍ່ມາຈຶ່ງມີການໃຊ້ຄຳວ່າ **"ລຳ"** ໃຊ້ຄຳວ່າ **"ເພງ"** ແລະຄຳວ່າ **"ດົນຕີ"** ໃນພາຍຫຼັງ ໂດຍມີພະຍານຫຼັກຖານອ້າງອີງພໍທີ່ຈະເຊື່ອໄດ້ວ່າ ມີມາໃນສະໄໝທີ່ຂອມເຮືອງອຳນາດໃນແຫຼມສຸວັນນະພູມລະຫວ່າງ ສະຕະວັດທີ 8-12 ຫຼືຊ້າສຸດກໍແມ່ນໃນກາງສະຕະວັດທີ 14 ສະໄໝພຣະເຈົ້າຟ້າງຸ່ມມະຫາຣາດ ຄອງອານາຈັກລາວລ້ານຊ້າງ ເພາະໃນສະໄໝນີ້ ລາວເຮົາໄດ້ຮັບເອົາວັດທະນະທຳຫຼາຍຢ່າງຈາກຂະແມ ລວມທັງພາສາ ສິລະປະ ນາຕະສິນ ແລະ ດົນຕີ.

**"ຮ້ອງ"** ຄືການເປັ່ງສຽງອອກມາທາງປາກ ໂດຍທີ່ບໍ່ມີຈັງຫວະ ທຳນອງ ສ່ວນ **"ຂັບ"** ເປັນການເປັ່ງສຽງອອກມາໂດຍມີການຄວບຄຸມ ຈັງຫວະ ທຳນອງໃຫ້ສຽງທີ່ເປັ່ງນັ້ນສູງ-ຕ່ຳ ສັ້ນ-ຍາວ. ການຂັບໃນໄລຍະເລີ່ມຕົ້ນ ບໍ່ມີສຽງເຄື່ອງເສບປະກອບໃສ່ ຕໍ່ມາຈຶ່ງມີການປະກອບສຽງເຄື່ອງເສບເຂົ້າໃສ່.

**ການຄວບຄຸມ ບັນຊາສິ່ງຕ່າງໆ ໃຫ້ເປັນໄປຕາມຈັງຫວະ ທຳນອງ ທິດທາງ ແລະຈຸດປະສົງທີ່ຄົນຕ້ອງການແບບນີ້ ລາວເຮົາລ້ວນແຕ່ໃຊ້ຄຳວ່າ "ຂັບ" ເປັນກິຣິຍາເຊັ່ນ: ຂັບລໍ້ ຂັບກວຽນ ຂັບລົດ ຂັບເຮືອ ຂັບຍົນ ຂັບໄລ່ ຂັບໜີຕີສົ່ງ** ແລະໃຊ້ຄຳວ່າ **"ຂັບເຄື່ອນ"** ກັບສິ່ງທີ່ເປັນຂະບວນການໃດໜຶ່ງເຊັ່ນ: ໃຊ້ນ້ຳມັນແອັດຊັງ ເປັນເຊື້ອເພີງໃຫ້ພະລັງຂັບເຄື່ອນລະບົບເຄື່ອງຈັກໃນລົດຍົນ, ໃຊ້ແຮງງານກຳມະກອນ ເປັນພະລັງຂັບເຄື່ອນຂະບວນການຜະລິດ ໃນໂຮງງານ.. ເປັນຕົ້ນ.

ການຂຽນຄຳວ່າ **"ລຳ"** ດ້ວຍພະຍັນຊະນະໂຕ ລ. ລີງ ຄືທີ່ເຫັນໃນຍຸ້ມື້ນີ້ ພາໃຫ້ເຂົ້າໃຈໄດ້ສອງທາງຄື:

1. ລຳ ມາຈາກພາສາຂະແມ ທີ່ມີຮູບຂຽນດ້ວຍໂຕ ຣ. ຫັນລີ້ນ **"ຣຳ"** ( ຄຳນີ້ມາຈາກພາສາປາລີອີກຕໍ່ໜຶ່ງໃນຄຳວ່າ **"ຣັມມີຍະ"** ອ່ານວ່າຣຳມະມີຍະ) ແປວ່າ ການກະທຳທີ່ພາໃຫ້ສະອອນຊອນຈິດ/ພາໃຫ້ມ່ວນຊື່ນ ກ່າວຄືການຟ້ອນ ຫຼື ການສະແດງຄວາມມ່ວນຊື່ນອອກ ດ້ວຍລີລາທ່າທາງຕ່າງໆ ເຊັ່ນ:**"ຣຳວົງ** "ກໍແມ່ນການຟ້ອນດ້ວຍຄວາມມ່ວນຊື່ນເປັນວົງອ້ອມຮອບນັ້ນເອງ( ຄຳວ່າ"ລຳ"ຕາມຈິດສຳນຶກ

ຂອງຄົນລາວ ແມ່ນໝາຍເຖິງການ ໂອລະນໍເປັນສຽງ ດ້ວຍກາບກອນປະກອບກັບສຽງເສບ (ແຄນ) ດັ່ງນັ້ນ "ລໍາວົງ" ຕາມຮູບຄໍາທີ່ໃຊ້ພະຍັນຊະນະ ໂຕ ລ. ມັນກໍຕ້ອງແມ່ນການລໍາໂອລະນໍ..ແບບເປັນວົງແຕ່ໃນຕົວຈິງພັດໝາຍເຖິງການຟ້ອນເປັນວົງທີ່ນັ້ນ-ສະແດງວ່າຮູບຄໍາວ່າ "ລໍາວົງ" ບໍ່ສອດຄ່ອງກັບສະພາບຕົວຈິງ )

**"ເຕັ້ນຣໍາ"** (ເຕັ້ນລໍາ) ຄໍານີ້ຄົນໄທຍ[1] ນິຍົມໃຊ້ ແຕ່ຄົນລາວບໍ່ໃຊ້ຫຼາຍ ມີແຕ່ຄົນໃນເມືອງຈໍານວນທີ່ມັກໄປມ່ວນຊື່ນໃນສະຖານບັນເທີງໃຊ້ກັນ ມັນເປັນຄໍາປະສົມລະຫວ່າງ"ເຕັ້ນ" ທີ່ເປັນພາສາລາວ ແລະ"ຣໍາ" ທີ່ເປັນພາສາຂະແມ. ເຕັ້ນຣໍາ ກໍຄືການໄປຟ້ອນ/ເຕັ້ນ ດ້ວຍລີລາທ່າທາງຕາມສຽງເພງ (ບໍ່ແມ່ນການເຕັ້ນແລ້ວລໍາໂອ່ຍໂອລະນໍ...ໄປພ້ອມເລີຍ) ຄົນລາວບໍ່ທັນລີ້ນເມື່ອເວົ້າໂຕ ຣ. ກໍເລີຍເວົ້າອອກສຽງເປັນໂຕ ລ. ລິງວ່າ "ລໍາ" ແທນ.

2. ລໍາ ທີ່ເປັນຄວາມລາວ (ຄາດວ່າລາວແທ້ໆ) ໝາຍເຖິງສິ່ງທີ່ມີລວງຍາວ (ໄກ) ເຊັ່ນລໍານໍ້າ ລໍາໄມ້ ລໍາອ້ອຍ ລໍາຄີງ ລໍາແຄ່ງ ລໍາຂາ ແລະ ໝາຍເຖິງພາຫະນະທີ່ສາມາດໃຊ້ບັນຈຸ ແລະເດີນທາງຍາວໄກໄດ້ເຊັ່ນ ລໍາລົດ ລໍາເຮືອ ລໍາກວຽນ...ເປັນຕົ້ນ

ກາບກອນທີ່ແຕ່ງເປັນພື້ນເປັນນິທານຕ່າງໆ ແລະໃຊ້ເປັນກອນລໍາ ນັ້ນກໍ(ມີລວງ)ຍາວ ແລະບັນຈຸເນື້ອຫາສາລະມາກມາຍ ເມື່ອແຕ່ງແລ້ວເພິ່ນກໍມັກບັນຈຸໄວ້ເປັນມັດ ເປັນຜູກ ເປັນພວງ ເປັນກ້ອນ ຫຼືເອົາໄວ້ໃນບັ້ງໄມ້ໄຜ່ ດັ່ງນັ້ນ ຈຶ່ງເອີ້ນວ່າ "ລໍາ" ເຊັ່ນລໍາພື້ນພະເຫວດ ລໍາພື້ນກາລະເກດ ລໍາພື້ນສັງສິນໄຊ... ແລະໃນເມື່ອນໍາເອົາກາບກອນ ອອກມາເຜີຍແຜ່ ດ້ວຍການຂັບຂານຈຶ່ງເອີ້ນຊື່ວ່າ **"ລໍາ"** ໂດຍປະສານສຽງເສບ: ປີ່ ແຄນ ຄ້ອງ ກອງ...ເຂົ້າໃສ່.

.........................................................................

*1. ຄໍາວ່າ **"ໄທຍ"** ທີ່ຂຽນມີໂຕ ຍ. ຕິດຢູ່ນໍາແບບນີ້ ແມ່ນຊື່ຈໍາເພາະຂອງປະເທດໜຶ່ງທາງທິດຕາເວັນຕົກ (Thailand) ແລະໝາຍເຖິງພົນລະເມືອງ ຫຼືຄົນທີ່ມີສັນຊາດໄທຍ ທັງນີ້ເພື່ອໃຫ້ແຕກຕ່າງກັບຄໍາວ່າ "ໄທ" ຫຼື ໄຕທີ່ເປັນຄໍາດັ້ງເດີມໃນພາສາລາວຊຶ່ງໝາຍເຖິງຄົນ ຫຼືກຸ່ມຄົນໃນທີ່ຕ່າງໆ ເຊັ່ນ ໄທເໜືອ ໄທໃຕ້ ໄທວັງວຽງ ໄທຊຽງຂວາງ ໄທດໍາ ໄທແດງ ໄທລື້ ໄທແອດ ໄທຊໍາ ຜູ້ໄທ ໄທເຮືອນ ໄທແຂກ..ເປັນຕົ້ນ.*

ຫາກພິຈາລະນາຢ່າງລະອຽດຈະເຫັນວ່າ ***ຣຳທີ່ມາຈາກພາສາຂະແມ ເປັນຄຳກິຣິຍາ ສ່ວນລຳທີ່ເປັນພາສາລາວນັ້ນ ມີສອງສະຖານະຄື: ມີພຽງແຕ່ໃນບໍລິບົດທີ່ໝາຍເຖິງການເປັ່ງສຽງລຳ( ໂອລະນໍ) ທ່ານັ້ນ ເປັນຄຳກິຣິຍາ ສ່ວນລຳໃນບໍລິບົດອື່ນໆ ລ້ວນແຕ່ເປັນຄຳບອກລັກສະນະນາມຄືບອກວັດຖຸສິ່ງຂອງປະເພດ ທີ່ມີລວງຍາວຄືລຳໄມ້ ລຳນ້ຳ ລຳເຮືອ ລຳລົດ....ດັ່ງນັ້ນຈຶ່ງອາດເປັນໄປໄດ້ວ່າ ທີ່ແທ້ແລ້ວ"ລຳ"( ໂອລະນໍ) ທີ່ເປັນຄຳກິຣິຍາ ໃນພາສາລາວນັ້ນ ອາດຢືມມາຈາກ"ຣຳ" ໃນພາສາຂະແມ ຍ້ອນເປັນຄຳກິຣິຍາຄືກັນ ແຕ່ສື່ຄວາມໝາຍປ່ຽນຈາກເດີມທີ່ແມ່ນ"ຟ້ອນ"ໄປເປັນ "ຂັບ".***

ມີຂໍ້ທີ່ໜ້າສັງເກດຕື່ມອີກຢ່າງໜຶ່ງທີ່ໜ້າສົນໃຈຄື ຄົນລາວເຮົາທາງພາກເໜືອລົງມາເຖິງເຂດລ່ອງງື່ມຍັງຄົງເອີ້ນຊື່ການສະແດງຢ່າງໜຶ່ງທີ່ມີມາແຕ່ບູຮານຕາມຄຳເວົ້າດັ້ງເດີມນັ້ນວ່າ **"ຂັບ"** ບໍ່ເຄີຍເວົ້າວ່າລຳເລີຍເຊັ່ນ: ຂັບງື່ມ ຂັບພວນ (ຂັບຊຽງຂວາງ) ຂັບຊຳເໜືອ ຂັບທຸ້ມ ຂັບລື້ ຂັບໄທດຳ ຂັບເຈີມ....ສ່ວນຄົນທາງໃຕ້ນັບແຕ່ແຂວງຄຳມ່ວນລົງໄປຊ້ຳພັດໃຊ້ຄຳວ່າ **"ລຳ"** ເອີ້ນຊື່ການສະແດງ ແບບດຽວກັນ ນັ້ນຄື ລຳມະຫາໄຊ ລຳຜູ້ໄທ ລຳຕັ່ງຫວາຍ ລຳຄອນສະຫວັນ ລຳສາລະວັນ ລຳສີທັນດອນ..... ຄຳວ່າ ຂັບ ນີ້ຍັງປາກົດໃນຄຳໂຕງໂຕຍທີ່ບອກອາການຂອງຄົນຊຶ່ງບໍ່ສະບາຍທີ່ວ່າ: ***ນອນບໍ່ຫຼັບ ຂັບບໍ່ມ່ວນ*** ອີກດ້ວຍ. ເປັນທີ່ຍອມຮັບກັນແລ້ວວ່າຄົນທາງພາກເໜືອ ສາມາດຮັກສາພາສາ ລາວ ແບບດັ້ງເດີມໄດ້ດີກວ່າຄົນທາງໃຕ້ .

ໃນວັນນະຄະດີໄທຍ ອັນດັ້ງເດີມກໍໃຊ້ຄຳວ່າ ຂັບຄືກັນເຊັ່ນ **"ຂັບເສພາ"** ເປັນຕົ້ນ ສ່ວນຄຳວ່າ **"ຣຳ"** ໃນພາສາໄທຍ ກໍໝາຍເຖິງຟ້ອນ ເພາະໄທຍກໍຮັບຄຳນີ້ມາຈາກພາສາຂະແມຄືກັນ. ສຳລັບຄຳວ່າລຳ ທີ່ໝາຍເຖິງການໂອລະນໍນັ້ນກໍມີແຕ່ໃນໝູ່ຄົນ( ລາວ )ຢູ່ພາກອີສານຂອງໄທຍທ່ານັ້ນ ແລະກໍມີແຕ່ສຳນຽງໃນພາສາລາວທ່ານັ້ນທີ່ສາມາດໃຊ້ລຳໂອລະນໍໄດ້ ສ່ວນສຳນຽງໄທຍແມ່ນໃຊ້ບໍ່ໄດ້.

ການປ່ຽນຄຳຈາກ**"ຂັບ"** ເປັນ **"ລຳ"** ນີ້ ເກີດຂຶ້ນ ເທິງດິນແດນ ແລະຜູ້ຄົນທີ່ມີການປ່ຽນຄຳເອີ້ນຊື່ສາຍແມ່ນ້ຳ ລະຫວ່າງ ຄຳວ່າ **"ນ້ຳ"** ກັບຄຳວ່າ **"ເຊ"** ຄືຄົນທີ່ຢູ່ທາງດ້ານເໜືອຂອງເມືອງທ່າແຂກ ແຂວງຄຳມ່ວນຂຶ້ນເມືອເໜືອ ເອີ້ນສາຍນ້ຳວ່າ **"ນ້ຳ"** ເຊັ່ນ ນ້ຳໂດນ ນ້ຳຫີນປູນ ນ້ຳກະດິງ ນ້ຳຊັນ ນ້ຳງຽບ ນ້ຳງື່ມ ນ້ຳອູ ນ້ຳແບ່ງ ນ້ຳທາ ສ່ວນສາຍແມ່ນ້ຳ ທີ່ຢູ່ດ້ານໃຕ້ເມືອງດັ່ງກ່າວລົງໄປຊ້ຳພັດຖືກຮຽກວ່າ**"ເຊ"** ເຊັ່ນ: ເຊບັ້ງໄຟ ເຊບັ້ງຫຽງ ເຊບັ້ງນວນ ເຊໂດນ ເຊກອງ .....

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ